ສຳນັກງານ ຄຄຂ
ຮັບ
ເລກທີ 1366
ວັນທີ 15 DEC 2017
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 55 /ຫກ

ນະຄອນຫຼວງວຽງຈັນ,ວັນທີ: 14 ທັນວາ 2017

# ບົດລາຍງານ

## ລາຍງານການເຄື່ອນໄຫວຂອງທະນາຄານແຫ່ງສປປລາວ ປະຈຳອາທິດທີ 27/11-01/12/2017 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

#### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 0,43% ທຽບເອີໂຣ ເນື່ອງຈາກຕົວເລກເສດຖະກິດຂອງສະຫະລັດອາເມລິກາ ອອກມາບໍ່ດີ ເປັນຕົ້ນແມ່ນຕົວເລກດຸນການຄ້າຂາດດຸນ 68,3 ຕື້ໂດລາສະຫະລັດ ຂອງເດືອນ 10/2017 ຈາກຂາດດຸນ 64,1 ຕື້ໂດລາສະຫະລັດ ໃນເດືອນຜ່ານມາ; ພ້ອມກັນນັ້ນ, ຈຳນວນປະຊາຊົນທີ່ຂໍສະຫວັດດີການຕໍ່ເນື່ອງເພີ່ມຂຶ້ນເປັນ 1,96 ລ້ານຄົນ ຂອງອາທິດທີ 18/11/2017 ຈາກ 1,92 ລ້ານຄົນໃນອາທິດຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 20-24/11/2017 | ອາທິດນີ້ 27/11-01/12/2017 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1851 | 1,1902 | -0,43% |
| ເຢນ/ໂດລາ | 111,44 | 112,42 | -0,87% |
| ບາດ/ໂດລາ | 32,670 | 32,60 | 0,21% |
| ເປໂຊ/ໂດລາ | 50,71 | 50,28 | 0,84% |
| ຣູເປີຍ/ໂດລາ | 13.510 | 13.524 | -0,10% |
| ໂດລາສິງກະໂປ/ໂດລາ | 1,3460 | 1,3468 | -0,06% |
| ຢວນ/ໂດລາ | 6,5880 | 6,6075 | -0,30% |

#### 1.2 ສະພາບລາຄານ້ຳມັນ ແລະຄຳໃນຕະຫຼາດໂລກ

- ລາຄານ້ຳມັນ ຫຼຸດລົງ 0,86% ຈາກ 57,81 ໂດລາ/ບາເຣວ ມາເປັນ 57,31 ໂດລາ/ບາເຣວ ເນື່ອງຈາກຄັງສຳຮອງນ້ຳມັນແຮັດຊັງຂອງສະຫະລັດອາເມລິກາ ເພີ່ມຂຶ້ນ 3,63 ລ້ານບາເຣວ ຂອງອາທິດທີ 24/11/2017;

- ສຳລັບລາຄາຄຳ ຫຼຸດລົງ 1,14% ຈາກ 1.291,78 ໂດລາ/ອອນ ມາເປັນ 1.277,01 ໂດລາ/ອອນ ເນື່ອງຈາກນັກລົງທຶນເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳເພື່ອເກງກຳໄລ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,02% ແຕ່ອ່ອນຄ່າລົງ 0,15% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບແຂງຄ່າ 0,22% ທຽບໃສ່ສະກຸນເງິນໂດລາ ແຕ່ອ່ອນຄ່າລົງ 8,36% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 20-24/11/2017 | | | ອາທິດນີ້ 27/11-01/12/2017 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.310,31 | 8.332,12 | 8.318,65 | 8.307,56 | 8.327,50 | 8.316,99 | 0,03% | 0,06% | 0,02% | 0,11% | 0,32% | 0,22% |
| ບາດ | 254,73 | 256,20 | 255,59 | 255,03 | 256.58 | 255,97 | -0,12% | -0,15% | -0,15% | -8,40% | -8,37% | -8,36% |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນM2

- ຖານເງິນຕາປະຈຳອາທິດນີ້ ເພີ່ມຂຶ້ນ 0,83% ເມື່ອທຽບໃສ່ອາທິດຜ່ານມາ ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 13,53%;
- ປະລິມານເງິນ M2 ຫຼຸດລົງ 0,38% ເມື່ອທຽບໃສ່ອາທິດຜ່ານມາ. ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 13,43%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (24-30/11/2017) ເຫັນວ່າ ທທກ ຊື້ໂດລາສຸດທິ 7,74 ລ້ານໂດລາ (ໃນນີ້ຊື້ໂດລາໄດ້ 32,08 ລ້ານໂດລາ ແລະ ຂາຍໂດລາໄດ້ 24,34 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 343,60 ລ້ານບາດ (ໃນນີ້ຊື້ບາດໄດ້ 221,17 ລ້ານບາດ ແລະ ຂາຍບາດໄດ້ 564,77 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ ເງິນໂດລາ ຫຼຸດລົງ 22,00% ແຕ່ເງິນບາດ ເພີ່ມຂຶ້ນ 25,33%.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາໃຫ້ທະນາຄານທຸລະກິດຈຳນວນ 16,64 ລ້ານໂດລາ ແຕ່ເງິນບາດ ບໍ່ມີການຊື້-ຂາຍ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 1,46 ລ້ານໂດລາສະຫະລັດ ແລະ ເງິນບາດ ຈຳນວນ 12,00 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆໃນອາທິດນີ້ ເຫັນວ່າບໍ່ມີການຊື້-ຂາຍ.

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 17-23/11/2017 | | ອາທິດນີ້ 24-30/11/2017 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **49,35** | **167,18** | **32,08** | **221,17** | **-34,99%** | **32,29%** |
| - ທ/ຄ ທຸລະກິດລັດ | 11,15 | 59,15 | 14,14 | 92,71 | 26,82% | 56,71% |
| - ທ/ຄ ທຸລະກິດອື່ນໆ | 38,20 | 108,02 | 17,94 | 128,46 | -53,04% | 18,92% |
| **2. ການຂາຍເງິນຕາຕ່າງປະເທດ** | **22,98** | **459,93** | **24,34** | **564,77** | **5,92%** | **22,79%** |
| - ທ/ຄ ທຸລະກິດລັດ | 12,87 | 123,72 | 13,01 | 128,01 | 1,09% | 3,47% |
| - ທ/ຄ ທຸລະກິດອື່ນໆ | 10,11 | 336,21 | 11,33 | 436,76 | 12,07% | 29,91% |
| **ຊື້-ຂາຍສຸດທິ ທທກ** | **26,37** | **-292,75** | **7,74** | **-343,60** | **-70,65%** | **17,37%** |
| - ຜິດດ່ຽງຊື້-ຂາຍ | 53,43% | -175,11% | 24,13% | -155,36% | -54,84% | -11,28% |
| **- ມູນຄ່າການຊື້-ຂາຍ** | **72,33** | **627,11** | **56,42** | **785,94** | **-22,00%** | **25,33%** |
| **3.ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ** | **-9,23** | **-34,43** | **-16,64** | **0,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 9,23 | 34,43 | 16,64 | 0,00 | | |
| **4.ຊື້-ຂາຍລະຫວ່າງ ທທກ ດ້ວຍກັນ** | **2,30** | **55,20** | **1,46** | **12,00** | | |
| **5.ທຫລ ກັບ ພາກສ່ວນອື່ນໆ** | **0,00** | **2.000** | **0,00** | **0,00** | | |
| -ທຫລ ຊື້ຈາກພາກສ່ວນອື່ນໆ | 0,00 | 2.000 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 11/2017 ຄາດວ່າຈະຢູ່ໃນລະດັບ 0,27% (ຕົວເລກຄາດຄະເນ).

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະການສົ່ງເສີມນຳໃຊ້ເງິນກີບ

ທະນາຄານແຫ່ງສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດໃນອາທິດນີ້ ຫຼຸດລົງ 31,1% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 39,56 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ເພີ່ມຂຶ້ນ 111,2% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 81,61 ລ້ານໂດລາສະຫະລັດທຽບເທົ່າ.

## 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງສປປລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 934 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 82 ສະບັບ ເທົ່າກັບ 9,60% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 401,87 ຕື້ກີບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 135,84 ຕື້ກີບ ເທົ່າກັບ 51% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (24-30/11/2017) ມີທັງໝົດ 4.063 ຄັ້ງ ໃນນັ້ນປະກອບດ້ວຍ:

- ສະກຸນເງິນກີບຈຳນວນ 3.855 ຄັ້ງ ລວມມູນຄ່າການໂອນທັງໝົດໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ 1.414,56 ຕື້ກີບ ຈາກ 2.161,94 ຕື້ກີບ ມາເປັນ 747,38 ຕື້ກີບ ເທົ່າກັບ 65,43%;
- ກະຊວງການເງິນ: ມີການເຄື່ອນໄຫວຈຳນວນ 208 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ 459 ຕື້ກີບ ຈາກ 477,71 ຕື້ກີບ ມາເປັນ 18,71 ຕື້ກີບ ເທົ່າກັບ 96,80%.

4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.</u>

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 1.028,92 ຈຸດ ເພີ່ມຂຶ້ນ 0,58% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 129.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 670,07 ລ້ານກວ່າກີບ ເພີ່ມຂຶ້ນ 193,05% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 65,07% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ 20-24/11/2017 | ດັດຊະນີອາທິດທີ 27/11-01/12/2017 | %(ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 1.025,65 | 1.028,92 | 0,58 | |

<u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ(LSX)</u> (ຫົວໜ່ວຍມູນຄ່າ 1.000ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການ ຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວມະຫາຊົນ | 12.500 | 67.880.000 | 5.430 | 77.500 | 424.825.000 | 5.482 | 520,00 | 525,85 | 51 |
| ບໍລິສັດຜະລິດໄຟຟ້າລາວມະຫາຊົນ | 32.900 | 158.820.000 | 4.827 | 49.200 | 240.635.000 | 4.891 | 49,54 | 51,51 | 64 |
| ບໍລິສັດລາວເວີນມະຫາຊົນ | - | - | 7.000 | 100 | 630.000 | 6.300 | - | - | -700 |
| ບໍລິສັດປິໂຕລຽມເທລດດິ້ງລາວມະຫາຊົນ | 100 | 230.000 | 2.300 | - | - | 2.200 | -100 | -100 | -100 |
| ບໍລິສັດສຸວັນນີໂຮມເຊັນເຕີມະຫາຊົນ | - | - | 2.950 | - | - | 2.950 | - | - | - |
| ບໍລິສັດພູສີກໍ່ສ້າງມະຫາຊົນ | 1.000 | 1.725.000 | 1.725 | 2.200 | 3.980.000 | 1.809 | 120,00 | 130,72 | 84 |
| ທັງໝົດ | 46.500 | 228.655.000 | 4.917 | 129.000 | 670.070.000 | | 177,42 | 193,05 | |

3. <u>ວຽກງານອື່ນໆທີ່ພົ້ນເດັ່ນ.</u>

- **ສຳເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ ແລະ ສຳມະນາຕ່າງໆ:** ❶ ກອງປະຊຸມ ສະພາບໍລິຫານທະນາຄານແຫ່ງ ສປປ ລາວ ສະໄໝສາມັນ ປະຈຳປີ 2017; ❷ ກອງປະຊຸມຄະນະຮັບຜິດຊອບການຍ້ອງຍໍກະກຽມສະເຫຼີມສະຫຼອງວັນສ້າງຕັ້ງທະນາຄານແຫ່ງ ສປປ ລາວ ຄົບຮອບ 50 ປີ ທີ່ (ທຫລ); ❸ ກອງປະຊຸມປັບປຸງໂຄງສ້າງຂອງ 2 ທະນາຄານ ທຸລະກິດລັດ ທີ່ (ທຫລ); ❹ ກອງປະຊຸມຄະນະປັບປຸງຮ່າງກົດໝາຍວ່າດ້ວຍລະບົບການຊຳລະແຫ່ງຊາດ ທີ່ (ແຂວງວຽງຈັນ); ❺ ກອງປະຊຸມປຶກສາຫາລືກ່ຽວກັບການເປີດໜັງສືສິນເຊື່ອ ທີ່ (ກະຊວງການເງິນ); ❻ ກອງປະຊຸມສຳມະນາໃນຫົວຂໍ້: ການຕ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍໃນຂັ້ນລະດັບສູງ ລະຫວ່າງວັນທີ 27 ພະຈິກ - 01 ທັນວາ 2017 ແລະ ❼ ກອງປະຊຸມເພື່ອປຶກສາຫາລື ກ່ຽວກັບຮ່າງແຜນສ້າງຄວາມເຂັ້ມແຂງໃຫ້ແກ່ຕະຫຼາດທຶນລາວ ແລະ ຮ່າງແຜນປັບປຸງການຄຸ້ມຄອງບໍລິຫານຂອງຕະຫຼາດຫຼັກຊັບລາວ ທີ່ (ທຫລ).

- ເຂົ້າຮ່ວມພິທີຕ່າງໆ: ❶ ພິທີມອບລາງວັນອາຊຽນດ້ານການພັດທະນາແມ່ຍິງ, ການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ແລະ ❷ ພິທີວາງພວງມະລາ ຢູ່ອານຸສາວະລີນັກຮົບນິລະນາມ ແລະ ວາງກະຕ່າດອກໄມ້ ຢູ່ຫໍພິພິທະພັນ ໄກສອນ ພົມວິຫານ ເນື່ອງໃນວັນຄ້າຍວັນເກີດ ປະທານ ໄກສອນ ພົມວິຫານ ຄົບຮອບ 97 ປີ.
- ທ່ານຮອງຜູ້ວ່າການພ້ອມດ້ວຍຄະນະເດີນທາງໄປເຄື່ອນໄຫວວຽກງານທາງລັດຖະການ ຢູ່ແຂວງສະຫວັນນະເຂດ ແລະ ແຂວງຄຳມ່ວນ;

**III. ແຜນວຽກຈຸດສຸມອາທິດຕໍ່ໄປ:**

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ; ສືບຕໍ່ຕິດຕາມ, ກວດກາ ແລະ ສັງລວມການຮັກສາລະດັບຖານະເງິນຕາຕ່າງປະເທດຂອງທະນາຄານທຸລະກິດທົ່ວລະບົບ.
- ກະກຽມຈັດກອງປະຊຸມ ແລະ ເຂົ້າຮ່ວມກອງປະຊຸມ ແລະ ສຳມະນາຕ່າງໆ: ❶ ກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນ ພະຈິກ 2017 ທີ່ (ຫສນຍ); ❷ ກອງປະຊຸມສ່ອງແສງສາຍພັກ ແລະ ສາຍລັດ ປະຈຳເດືອນ ພະຈິກ 2017 ທີ່ (ທຫລ); ❸ ກອງປະຊຸມປຶກສາຫາລືວຽກອວ່າຍໜີ້ສາມແຈ ທີ່ (ທຫລ); ❹ ກອງປະຊຸມຄະນະກຳມະການຄຸ້ມຄອງຫຼັກຊັບ ຄັ້ງທີ III ປະຈຳປີ 2017; ❺ ກອງປະຊຸມປຶກສາຫາລືກ່ຽວກັບຮ່າງດຳລັດວ່າດ້ວຍທຸລະກິດເຊົ່າສິນເຊື່ອ ແລະ ❻ ກອງປະຊຸມສຳມະນາວຽກງານບາເຊວ ຮ່ວມກັບ ທະນາຄານແຫ່ງລັດຫວຽດນາມ ແລະ ບໍລິສັດເອີນແອນຢັງ ຫວຽດນາມ.
- ທ່ານຜູ້ວ່າການພ້ອມດ້ວຍຄະນະກະກຽມເດີນທາງໄປເຄື່ອນໄຫວວຽກທາງລັດຖະການ ຕ່າງແຂວງ;
- ທ່ານຮອງຜູ້ວ່າການພ້ອມດ້ວຍຄະນະກະກຽມເດີນທາງໄປເຄື່ອນໄຫວວຽກທາງລັດຖະການ ຢູ່ແຂວງບໍລິຄຳໄຊ;
- ທ່ານຮອງຜູ້ວ່າການພ້ອມດ້ວຍຄະນະກະກຽມເດີນທາງໄປເຄື່ອນໄຫວວຽກທາງລັດຖະການ ຢູ່ແຂວງວຽງຈັນ;
- ກະກຽມຈັດຕັ້ງພິທີເຊັນບົດບັນທຶກຄວາມເຂົ້າໃຈ ລະຫວ່າງ ທຫລ ແລະ ທະນາຄານກາງ ສ.ເກົາຫຼີ ຢູ່ແຂວງຫຼວງພະບາງ.

ຫົວໜ້າຫ້ອງການ

ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ